# ເປັນສິດ ຫຼື ເປັນຄຣູ

( ອ່ານພຣະທັມ ເຮັບເຣີ 5:5-14 )

"ຈົ່ງມອບຄຳສອນທີ່ເຈົ້າໄດ້ຍິນຈາກເຮົາຕໍ່ໜ້າພະຍານຫຼາຍຄົນ ໄວ້ກັບຄົນຊື່ສັດທີ່ສາມາດສອນຄົນອື່ນໄດ້ດ້ວຍ."
( 2 ຕີໂມທຽວ 2:2 )

ລູກສິດໂຮງຮຽນວິທຍາລັຍຄົນນຶ່ງມີບັນຫາເຣື່ອງການສຶກສາຂອງລາວ ມື້ນຶ່ງລາວເລີຍຕັດສິນໃຈເຂົ້າໄປພົບກັບອາຈານຂອງລາວ. ລາວໄດ້ເວົ້າແກມຈົ່ມໃຫ້ອາຈານຟັງວ່າ "ຂ້ານ້ອຍໄດ້ຮຽນຢ່າງເອົາໃຈໃສ່ແລະພະຍາຍາມຮຽນຢ່າງຂຍັນທີ່ສຸດ ແຕ່ຂ້ານ້ອຍຈົດຈຳບໍ່ໄດ້ເລີຍໃນສິ່ງທີ່ຂ້ານ້ອຍໄດ້ຮຽນມານັ້ນ. ຂ້ານ້ອຍທ່ອງຈຳ ທ່ອງແລ້ວທ່ອງອີກແຕ່ກໍຈື່ຈຳໄດ້ບໍ່ດົນ ອາຈານຄິດວ່າຂ້ານ້ອຍຄວນຈ້າງຄຣູ ເພື່ອສອນເພີ້ມເຕີມບໍ່? "

ອາຈານເຂົ້າໃຈໃນບັນຫາຂອງລູກສິດຂອງຕົນເປັນຢ່າງດີ ຈຶ່ງຕອບລູກສິດໄປວ່າ "ບໍ່, ອາຈານບໍ່ເຫັນດີນຳ, ເຈົ້າບໍ່ຈຳເປັນຕ້ອງຈ້າງຄຣູສອນເພີ້ມເຕີມໃຫ້ເສັຽເງິນລ້າໆ ດອກ ແຕ່ເຈົ້າຕ້ອງການ ນັກຮຽນ ເພີ້ມເຕີມ." ອາຈານກຳລັງສອນລູກສິດຄົນນັ້ນວ່າ ການຮໍ່າຮຽນຂອງລາວຈະດີຂຶ້ນຖ້າລາວຫາກນຳເອົາສິ່ງທີ່ລາວໄດ້ຮຽນໄດ້ສຶກສາໄປແບ່ງປັນ, ໂອ້ລົມ, ແລະແລກປ່ຽນຄວາມຄິດຄວາມເຫັນກັບລູກສິດຄົນອື່ນໆ.

ອາຈານຄົນນັ້ນໄດ້ເຕືອນສະຕິພວກເຮົາເໝືອນກັນ ເຖິງບັນດາຄຣິສຕຽນທັງຫຼາຍທີ່ຮູ້ຫຼັກຄວາມຈິງຂອງພຣະຄັມພີຫາກແຕ່ຍັງບໍ່ເຂົ້າໃຈຢ່າງຖ່ອງແທ້ເຖິງຄວາມໝາຍອັນແທ້ຈິງໃນຂໍ້ພຣະຄັມພີ. ເຂົາເຈົ້າໄປໂບດທຸກວັນອາທິດ, ໄດ້ຟັງແລະເບິ່ງລາຍການເທສນາທັງທາງວິທະຍຸແລະໂທຣະທັດດ້ວຍຄວາມເຊື່ອ, ໄດ້ຮຽນພຣະຄັມພີທາງໄປສະນີ, ແລະໄດ້ເອົາໃຈໃສ່ສຶກສາພຣະຄັມພີດ້ວຍຕົນເອງເປັນປະຈຳບໍ່ຂາດ. ແຕ່ເຖິງປານນັ້ນ, ເຂົາເຈົ້າກໍຍັງບໍ່ຮູ້ຈັກເອົາຂໍ້ພຣະຄັມພີໄປໃຊ້ໃນຊີວິດຂອງຕົນຢ່າງແທ້ຈິງ. ແມ່ນຫຍັງຄືບັນຫາແລະສາຍເຫດດັ່ງກ່າວນີ້? ສາຍເຫດກໍຄືເຂົາເຈົ້າບໍ່ເກັບກຳໃນສິ່ງທີ່ຕົນໄດ້ຮຽນໄດ້ສຶກສາ ບໍ່ພຽງແຕ່ເທົ່ານັ້ນ ເຂົາເຈົ້າຍັງຢາກໃຫ້ຄົນອື່ນສອນເຂົາເຈົ້າເພີ້ມເຕີມອີກ. ເຂົາເຈົ້າຈຳເປັນຕ້ອງນຳເອົາສິ່ງທີ່ຕົນໄດ້ຮຽນໄດ້ສຶກສາໄປແບ່ງປັນ, ໂອ້ລົມ, ແລະແລກປ່ຽນຄວາມຄິດຄວາມເຫັນກັບຄົນອື່ນ. ຖ້າເຂົາເຈົ້າຫາກປະຕິບັດຕາມຄຳແນະນຳທີ່ກ່າວມານີ້ຢ່າງແທ້ຈິງ ເຂົາເຈົ້າຈະເຂົ້າໃຈດີຫຼາຍຂຶ້ນໃນສິ່ງທີ່ຕົນໄດ້ຮຽນໄດ້ສຶກສາ.

ທ່ານເຄີຍໄດ້ນຳເອົາພຣະຄຳຂອງພຣະເຈົ້າໄປແບ່ງປັນ, ໂອ້ລົມກັບຄົນອື່ນຫຼືບໍ່? ຖ້າຫາກທ່ານບໍ່ເຄີຍ, ບັດນີ້ເຖິງເວລາອັນສົມຄວນແລ້ວທີ່ທ່ານຈະເຊົາເປັນລູກສິດ ແລະໃຫ້ເລີ້ມເປັນຄຣູເສັຽຕັ້ງແຕ່ບັດນີ້ເປັນຕົ້ນໄປ.

**ທາງທີ່ດີອີກທາງນຶ່ງໃນການສຶກສາພຣະຄຳແຫ່ງຄວາມຈິງຂອງພຣະເຈົ້າ ຄືການນຳເອົາສິ່ງທີ່ເຮົາໄດ້ສຶກສາໄປແບ່ງປັນສັ່ງສອນຄົນອື່ນດ້ວຍ.**

ຮຽບຮຽງຈາກ ອາວເດລີເບຣດ